ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ຫ້ອງການ

ເລກທີ 1575 /ຫອຄ

ນະຄອນຫຼວງວຽງຈັນ, ວັນທີ 28 ມິຖຸນາ 2024

# ແຈ້ງການ

ເຖິງ: ບັນດາພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ໃນຂອບເຂດທົ່ວປະເທດ.

ເລື່ອງ: ເພີ່ມທະວີຄວາມເອົາໃຈໃສ່ ແລະ ເຂັ້ມງວດໃນການປະຕິບັດຄວາມສອດຄ່ອງກັບມາດຕະການສຳລັບການນຳເຂົ້າສິນຄ້າ ແລະ ການດັດສົມຫົວໜ່ວຍວິສາຫະກິດນຳເຂົ້າສິນຄ້າ.

- ອີງຕາມ ຄຳສັ່ງວ່າດ້ວຍການເພີ່ມທະວີແກ້ໄຂບັນຫາເຄັ່ງຮ້ອນ ຂອງ ເສດຖະກິດ-ການເງິນ, ບັນຫາເງິນເຟີ້, ອັດຕາແລກປ່ຽນ, ລາຄາສິນຄ້າ ແລະ ໜີ້ສິນຕ່າງປະເທດ ສະບັບເລກທີ 13/ນຍ, ລົງວັນທີ 29 ສິງຫາ 2023;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 2072/ອຄ, ລົງວັນທີ 15 ພະຈິກ 2023;
- ອີງໃສ່ ຄຳແນະນຳວ່າດ້ວຍການຈັດຕັ້ງຜັນຂະຫຍາຍ ມະຕິຕົກລົງ ສະບັບເລກທີ 19/ກມພສ ແລະ ນິຕິກຳຜັນຂະຫຍາຍຂອງລັດຖະບານໃນຂະແໜງອຸດສາຫະກຳ ແລະ ການຄ້າ, ສະບັບເລກທີ 2329/ອຄ, ລົງວັນທີ 11 ທັນວາ 2023.

ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແລະ ເອກະພາບກັນໃນຂອບເຂດທົ່ວປະເທດ ຕໍ່ການຜັນຂະຫຍາຍເນື້ອໃນຂອງ ຄຳແນະນຳວ່າດ້ວຍ ການຈັດຕັ້ງຜັນຂະຫຍາຍ ມະຕິຕົກລົງ ສະບັບເລກທີ 19/ກມພສ ແລະ ນິຕິກຳຜັນຂະຫຍາຍຂອງລັດຖະບານ ໃນຂະແໜງອຸດສາຫະກຳ ແລະ ການຄ້າ ເລກທີ 2329/ອຄ, ລົງວັນທີ 11 ທັນວາ 2023 ແນໃສ່ຮັບປະກັນຄວາມສອດຄ່ອງດ້ານມາດຕະຖານ ແລະ ຄວາມປອດໄພຂອງສິນຄ້າທີ່ນຳເຂົ້າຈາກຕ່າງປະເທດຕໍ່ຜູ້ຊົມໃຊ້, ລວມເຖິງການກຳນົດເງື່ອນໄຂເພື່ອດັດສົມຫົວໜ່ວຍຜູ້ນຳເຂົ້າລົງໃຫ້ແທດເໝາະກັບແຕ່ລະທ້ອງຖິ່ນ.

ຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ ເພື່ອມອບໃຫ້ ພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ເພີ່ມທະວີຄວາມເອົາໃຈໃສ່ ແລະ ເຂັ້ມງວດໃນການຈັດຕັ້ງປະຕິບັດວຽກງານ ດັ່ງນີ້:

1. ຊີ້ນຳ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ແລະ ເຈົ້າໜ້າທີ່ກວດກາການຄ້າ ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ລົງກວດກາສິນຄ້າທີ່ ຜູ້ນຳເຂົ້າ, ຜູ້ຂາຍຍົກ ແລະ ຂາຍຍ່ອຍ ຈຳໜ່າຍພາຍໃນປະເທດ ຕ້ອງສອດຄ່ອງກັບມາດຕະການ ແລະ ມາດຕະຖານ ດັ່ງນີ້:
   1.1 ສິນຄ້ານຳເຂົ້າ ທີ່ຈຳໜ່າຍ ແລະ ຈໍລະຈອນຢູ່ພາຍໃນ ຕ້ອງນຳເຂົ້າ ໂດຍບໍລິສັດທີ່ໄດ້ລົງທະບຽນເປັນຜູ້ນຳເຂົ້ານຳກະຊວງອຸດສາຫະກຳ ແລະ ການຄ້າ ແລະ ຊຳລະສະສາງຜ່ານບັນຊີສະເພາະກ່ຽວກັບການນຳເຂົ້າ ແລະ ສົ່ງອອກ ຂອງຜູ້ນຳເຂົ້າ ທີ່ເປີດກັບທະນາຄານທຸລະກິດ ຢູ່ ສປປ ລາວ;

1.2 ສິນຄ້າທີ່ນຳເຂົ້າເພື່ອຈຳໜ່າຍພາຍໃນປະເທດ ຕ້ອງນຳເຂົ້າໂດຍຜ່ານ ດ່ານຊາຍແດນສາກົນ, ໂດຍສະເພາະສິນຄ້າກະສິກຳ ແລະ ສິນຄ້າບໍລິໂພກ ແມ່ນໃຫ້ນຳເຂົ້າສະເພາະດ່ານຊາຍແດນສາກົນ ທີ່ມີໜ່ວຍງານກັກກັນພືດ-ສັດ, ອາຫານ, ຢາ ແລະ ຄວບຄຸມພະຍາດຕິດຕໍ່ ຕັ້ງຢູ່ເທົ່ານັ້ນ;

1.3 ສິນຄ້ານຳເຂົ້າ ຕ້ອງປະກອບເອກະສານ ແລະ ດຳເນີນການນຳເຂົ້າ ໂດຍສອດຄ່ອງກັບຂັ້ນຕອນ ແລະ ລະບຽບການທີ່ກ່ຽວຂ້ອງ ເປັນຕົ້ນ ມີໃບອະນຸຍາດນຳເຂົ້າ, ໃບຢັ້ງຢືນຄວາມສອດຄ່ອງທາງດ້ານລະບຽບການສຸຂານາໄມ-ສຸຂານາໄມພືດ (SPS) ແລະ ລະບຽບການເຕັກນິກຕໍ່ການຄ້າ (TBT) ທີ່ແຕ່ລະຂະແໜງການວາງອອກ;

1.4 ການນຳເຂົ້າ ສິນຄ້າກະສິກຳ ແລະ ສິນຄ້າບໍລິໂພກ ໂດຍສະເພາະ ອາຫານ ແລະ ຜະລິດຕະພັນສັດ ແລະ ພືດຜັກ-ໝາກໄມ້) ຕ້ອງໄດ້ຮັບອະນຸຍາດນຳເຂົ້າຈາກ ກົມອາຫານ ແລະ ຢາ, ກົມລ້ຽງສັດ ແລະ ການປະມົງ ແລະ ກົມປູກຝັງ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບ ຂອງ ແຕ່ລະພາກສ່ວນ (ລາຍລະອຽດໃຫ້ປະຕິບັດຕາມຄູ່ມືການຈັດຕັ້ງປະຕິບັດມາດຕະການຄຸ້ມຄອງສຳລັບການນຳເຂົ້າ ສິນຄ້າອຸປະໂພກ-ບໍລິໂພກ);

1.5 ສິນຄ້າອຸປະໂພກ-ບໍລິໂພກທີ່ນຳເຂົ້າຈາກຕ່າງປະເທດ ຕ້ອງຕິດສະຫຼາກສິນຄ້າເປັນພາສາລາວໃສ່ບັນຈຸພັນ ໂດຍເນື້ອໃນຂອງສະຫຼາກສິນຄ້າ ຕ້ອງລະບຸຂໍ້ມູນທີ່ສຳຄັນ ໄດ້ແກ່: 1) ຜູ້ຜະລິດ (ແຫຼ່ງທີ່ມາ/ແຫຼ່ງຜະລິດຂອງສິນຄ້າ), 2) ຜູ້ນຳເຂົ້າ ແລະ/ຫຼື ຈັດຈຳໜ່າຍ, 3) ຂໍ້ມູນທີ່ຕິດພັນກັບສຸຂະພາບ (ສ່ວນປະກອບ, ຂໍ້ຄວນລະວັງ/ຄຳເຕືອນໃນການນຳໃຊ້ສິນຄ້າ) ແລະ 4) ກາໝາຍຢັ້ງຢືນຮັບຮອງມາດຕະຖານຕ່າງໆ ໂດຍສະເພາະ ເລກຈົດທະບຽນ ແລະ ກາໝາຍຮັບຮອງຄວາມປອດໄພ (ອຢ) ຂອງໜ່ວຍງານອາຫານ ແລະ ຢາ ແລະ ລະບຽບການ ທີ່ປະກາດໃຊ້ໃນແຕ່ລະໄລຍະ;

1.6 ສຳລັບ ສິນຄ້າປະເພດ 1) ເຫຼົ້າ, ເບຍ ແລະ ເຄື່ອງດື່ມທີ່ມີທາດເຫຼົ້າ, 2) ຢາສູບ ແລະ ຜະລິດຕະພັນຢາສູບ ແລະ 3) ໂທລະສັບມືຖື, ກ້ອງຖ່າຍຮູບ, ກ້ອງຖ່າຍວີດີໂອ, ໂມງ ແລະ ແວ່ນຕາ ຕ້ອງໄດ້ຕິດສະແຕມພາສີ ແລະ ນຳເຂົ້າຢູ່ດ່ານສາກົນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກະຊວງການເງິນວາງອອກ ແຕ່ລະໄລຍະ.

1.7 ສິນຄ້ານຳເຂົ້າທີ່ຈຳໜ່າຍຢູ່ໃນທ້ອງຕະຫຼາດ ຕ້ອງມີແຫຼ່ງທີ່ມາ ແລະ ສາມາດກວດສອບໄດ້;

1.8 ຖ້າກວດພົບສິນຄ້ານຳເຂົ້າທີ່ບໍ່ສອດຄ່ອງກັບເງື່ອນໄຂທີ່ໄດ້ລະບຸມາຂ້າງເທິງ, ມອບໃຫ້ເຈົ້າໜ້າທີ່ກວດກາການຄ້າ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຍຶດ ແລະ ດຳເນີນມາດຕະການຕາມທີ່ໄດ້ກຳນົດໄວ້ໃນລະບຽບການກ່ຽວຂ້ອງ.

2. ຊີ້ນຳຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ສົມທົບກັບຂະແໜງກະສິກຳ ແລະ ປ່າໄມ້, ຂະແໜງສາທາລະນະສຸກ, ສະພາການຄ້າ ແລະ ອຸດສາຫະກຳ, ສະມາຄົມ, ຜູ້ຜະລິດ ດຳເນີນການສັງລວມ ແລະ ກຳນົດລາຍການສິນຄ້າທີ່ສາມາດຜະລິດຢູ່ໃນທ້ອງຖິ່ນຂອງຕົນ ທີ່ສາມາດກຸ້ມຕົນເອງ ແລະ ຈຳໜ່າຍເປັນສິນຄ້າພາຍໃນແຂວງ ແລະ ແຂວງໃກ້ຄຽງ ໂດຍສະເພາະແມ່ນສິນຄ້າທີ່ຈຳເປັນຕໍ່ການດຳລົງຊີວິດ ເພື່ອນຳສົ່ງໃຫ້ຂະແໜງການກ່ຽວຂ້ອງພາຍໃນແຂວງດຳເນີນການຄຸ້ນຄ່ຽງການສະໜອງກ່ອນທີ່ຂະແໜງການຮັບຜິດຊອບ ພິຈາລະນາອະນຸຍາດນຳເຂົ້າ ຫຼື ສົ່ງອອກ ແຕ່ລະຄັ້ງ;

3. ສົມທົບສະພາການຄ້າ ແລະ ອຸດສາຫະກຳ ຊຸກຍູ້ສົ່ງເສີມຜູ້ຜະລິດພາຍໃນຢ່າງມີຈຸດສຸມ, ມີປະລິມານທີ່ພຽງພໍກັບຄວາມຕ້ອງການພາຍໃນ, ມີຄຸນນະພາບທີ່ດີ ມີລາຄາທີ່ສາມາດແຂ່ງຂັນໄດ້ກັບສິນຄ້ານຳເຂົ້າ;

4. ສົມທົບກັບ ສະພາການຄ້າ ແລະ ອຸດສາຫະກຳ ກວດຄືນ ແລະ ດັດສົມບັນດາຫົວໜ່ວຍວິສາຫະກິດທີ່ດຳເນີນກິດຈະການນຳເຂົ້າ ທີ່ຂຶ້ນກັບແຂວງຂອງຕົນ ໂດຍພິຈາລະນາບົນພື້ນຖານເງື່ອນໄຂ ດັ່ງຕໍ່ໄປນີ້:

4.1 ວິສາຫະກິດ ທີ່ບໍ່ມີການເຄື່ອນໄຫວນຳເຂົ້າໂຕຈິງ ໃນໄລຍະເວລາ 01 ປີຜ່ານມາ;

4.2 ວິສາຫະກິດ ທີ່ບໍ່ໄດ້ລົງທະບຽນເປັນຜູ້ນຳເຂົ້າ ແລະ ສົ່ງອອກ ແລະ ມີບັນຊີສະເພາະກ່ຽວກັບການນຳເຂົ້າ ແລະ ສົ່ງອອກ ທີ່ເປີດກັບທະນາຄານທຸລະກິດ ຢູ່ ສປປ ລາວ;

4.3 ວິສາຫະກິດ ທີ່ດຳເນີນກິດຈະການນຳເຂົ້າ-ສົ່ງອອກ ທີ່ບໍ່ສອດຄ່ອງກັບການໄດ້ຮັບອະນຸຍາດ;

4.4 ວິສາຫະກິດ ທີ່ບໍ່ຖືບັນຊີ, ບໍ່ມີລະບົບບັນທຶກການຂາຍສິນຄ້າ ແລະ ການບໍລິການ;

4.5 ວິສາຫະກິດ ທີ່ບໍ່ມີສາງສິນຄ້າ ທີ່ເປັນບ່ອນຮອງຮັບ ແລະ ກະຈາຍສິນຄ້າ, ຊຶ່ງສາງຕ້ອງມີລະບົບ ບັນທຶກຂໍ້ມູນສິນຄ້າ ເຂົ້າ-ອອກ.

5. ຜັນຂະຫຍາຍ ແລະ ກຳນົດເປັນແຜນວຽກລະອຽດຈະແຈ້ງ ແລະ ເຫັນໄດ້ເຖິງຜົນການຈັດຕັ້ງປະຕິບັດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ເປັນບ່ອນອີງຈັດຕັ້ງປະຕິບັດຕາມນີ້ດ້ວຍ.

ຫົວໜ້າຫ້ອງການ

ປອ. ບົວວັນ ວິລະວົງ